ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------000000-------------

ບໍລິສັດ ອີທີແອລ ມະຫາຊົນ

ພະແນກ ບໍລິຫານ ວັນທີ 23/08/2012

# ບົດສະຫຼຸບ

ແຜນວຽກປະຈໍາອາທິດ ແລະ ທິດທາງແຜນການປະຕິບັດວຽກອາທິດຕໍ່ໄປ ຂອງພະແນກ ບໍລິຫານ

## VI. ວຽກທີ່ປະຕິບັດໃນອາທິດຜ່ານມາ:

**ວຽກຫ້ອງການ:**

- ການແຈກຢາຍເງິນຍາມປະຈໍາເດືອນ 7 ແລະ ສືບຕໍ່ສັນຍາ BTS ແມ່ນສໍາເລັດແລ້ວ.
- ແກ້ໄຂເອກະສານປະຈໍາວັນ, ເອກະສານເບີຈ່າຍ, ຂໍ້ຕົກລົງ.
- ຈັດຫ້ອງປະຊຸມ, ເພື່ອອໍານວຍຄວາມສະດວກໃຫ້ແກ່ການປະຊຸມ.
- ສໍາເລັດການມອບເຄື່ອງອຸປະຖໍາໃຫ້ແກ່ພາກສ່ວນພາຍນອກ.
- ສໍາເລັດແລ່ນເອກະສານເດີນທາງໃຫ້ພະນັກງານໄປຕ່າງແຂວງເປັນຈໍານວນ 1ຊຸດ.
- ຈັດສິ່ງເຄື່ອງຫຼືອຸປະກອນຕ່າງໆໃຫ້ບັນດາ ສາຂາແຂວງ ອທອ.

**ວຽກງານຄຸ້ມຄອງຊັບສິນ:**

- ຕິດຕາມໃສ່ລະຫັດຊັບສິນເກີດຂຶ້ນໃໝ່ໃນເດືອນ.
- ຕິດຕາມການ ກໍ່ສ້າງອາຄານຫ້ອງການ ຢູ່ສູນດາວທຽມວຽງຈັນ ປັດຈຸບັນ ການກໍ່ສ້າງສໍາເລັດແລ້ວ 100 %.
- ເບີກຈ່າຍປະຈໍາວັນບັດ, ເຄື່ອງສິ່ງເສີມການຂາຍ, ອຸປະກອນຕິດຕັ້ງ.
- ສໍາເລັດການໄປແນະນໍາ ພ້ອມຕິດຕາມການໃສ່ລະຫັດຊັບສິນຢູ່ສາຂາ ອທອ ແຂວງ ຊຽງຂວາງ, ແຂວງ ຫົວພັນ.
- ເປີດຊ່ອງແຂ່ງຂັນລາຄາປຸກສ້າງຫ້ອງການສູນບໍລິການທ່າແຕງ.
- ຕິດຕາມ ການກໍ່ສ້າງຫ້ອງການສາຂາ ອທອ ຊຽງຂວາງ ສໍາເລັດ 25%.
- ຕິດຕາມການກໍ່ສ້າງສູນບໍລິການເມືອງ ຫົງສາ ສໍາເລັດ 20%.
- ກະກຽມການຊອກຫາ ບໍລິສັດ ຫຼື ຮ້ານທີ່ມີບິນອາກອນ ເພື່ອມາປັບປຸງປ່ອງບໍລິການຕະຫຼາດສີໄຄ.

**ວຽກງານຄຸ້ມຄອງພາຫະນະ:**

- ຈັດພາຫະນະຮັບໃຊ້ວຽກ ຕາມການສະເໜີຂອງ ແຕ່ລະພະແນກການ.
- ເບີກຈ່າຍ ແລະ ຄຸ້ມຄ້ອງນໍ້າມັນເຊື້ອໄຟ ແລະ ບໍາລຸງຮັກສາ ພາຫະນະທີ່ເປ່ເພ.

ວຽກງານຈັດຊື້:

- ການຈັດຊື້ Battery 200Ah/12V ຈຳນວນ 800 ໜ່ວຍ ລໍຖ້າຮັບເຄື່ອງ.
- ການຈັດຊື້ ເຄື່ອງລະບົບ HR ແລະ MIS ແມ່ນຕໍ່ລອງແລ້ວ ຢູ່ໃນຂັ້ນຕອນເຮັດສັນຍາ.
- ການຈັດຊື້ ອຸປະກອນສາຍເຊື່ອ Media Convertor ຢູ່ໃນຂັ້ນຕອນສົ່ງເຄື່ອງແລ້ວບາງລາຍການ.
- ການຈັດພິມແບບຟອມໃບແຈ້ງລາຄາຂາຍສິນຄ້າແມ່ນເຮັດສັນຍາແລ້ວລໍຖ້າຮັບເຄື່ອງ.
- ການຈັດຊື້ລົດ BYD F6 ແລະ BYD S6 ໄດ້ຮັບລົດແລ້ວ.
- ການຈັດຊື້ indoor lader ແລະ Antenna Mounting ແມ່ນເຮັດສັນຍາແລ້ວລໍຖ້າຮັບເຄື່ອງ.
- ການຈັດຊື້ ອຸປະກອນ ລະບົບສາຍດິນ ເຊັນສັນຍາແລ້ວລໍຖ້າຮັບເຄື່ອງ.
- ການຈັດຊື້ Surge Protection ແລະ Module Rectify (Emerson) ລໍຖ້າຮັບເຄື່ອງ.
- ການຈັດຊື້ ອຸປະກອນຕິດຕັ້ງສາຍໄຍແກ້ວ 4 ລາຍການລໍຖ້າຮັບເຄື່ອງ.
- ຊື້ ADSL Modem ຈຳນວນ 40 ອັນແມ່ນໄດ້ຮັບເຄື່ອງກ່ອນແລ້ວ.
- ເອົາໜ່ວຍໂທລະສັບມືຖືຂອງບໍລິສັດ AGAP ມາຝາກຂາຍແມ່ນເຮັດສັນຍາແລ້ວ.

ວຽກກໍ່ສ້າງຕິດຕັ້ງ:

- ການກໍ່ສ້າງ BTS ຢູ່ແຂວງ ຫຼວງນ້ຳທາ ຈຳນວນ 02 ສະຖານີ ແມ່ນຢູ່ໃນຂັ້ນຕອນໃຫ້ແຂວງເຮັດສັນຍາ.
- ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ຢູ່ແຂວງ ໄຊຍະບູລີ ຈຳນວນ 09 ສະຖານີ ສົ່ງເອກະສານໃຫ້ແຂວງ ດຳເນີນການທາບທາມລາຄາຢູ່ແຂວງແລ້ວ (ລໍຖ້າ ອທອ ສາຂາ ລາຍງານຜົນການທາບທາມລາຄາ).
- ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ຢູ່ແຂວງ ບໍ່ແກ້ວ ຈຳນວນ 06 ສະຖານີ ສົ່ງເອກະສານໃຫ້ແຂວງດຳເນີນການທາບທາມລາຄາຢູ່ແຂວງແລ້ວ (ລໍຖ້າ ອທອ ສາຂາ ລາຍງານຜົນການທາບທາມລາຄາ).
- ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ຢູ່ແຂວງ ຫົວພັນ ຈຳນວນ 07 ສະຖານີ ສົ່ງເອກະສານໃຫ້ແຂວງດຳເນີນການທາບທາມລາຄາຢູ່ແຂວງແລ້ວ (ລໍຖ້າ ອທອ ສາຂາ ລາຍງານຜົນການທາບທາມລາຄາ).
- ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ຢູ່ແຂວງ ຜົ້ງສາລີ ຈຳນວນ 05 ສະຖານີ ສົ່ງເອກະສານໃຫ້ແຂວງດຳເນີນການທາບທາມລາຄາຢູ່ແຂວງແລ້ວ (ລໍຖ້າ ອທອ ສາຂາ ລາຍງານຜົນການທາບທາມລາຄາ).

ວຽກນຳເຂົ້າ:

- ນຳເຂົ້າອຸປະກອນ PHD ແລະ Air Card.
- ນຳເຂົ້າເຄື່ອງປ້ອງກັນໄຟເກີນ Surd protection.

## VII. ແຜນວຽກອາທິດຕໍ່ໄປ:

- ລົງຢາຍເງິນເດືອນຍາມຜູ້ເຝົ້າຍາມບັນຫາ BTS ແລະ RSU ຢູ່ນະຄອນຫຼວງວຽງຈັນ ແລະ ສຳຫຼວດການຖາງຫຍ້າ, ໄຟຟ້າ-ນ້ຳປາປາ.
- ຈັດພິທີມອບເຄື່ອງອຸປະຖຳ, ເງິນອຸປະຖຳໃຫ້ແກ່ພາກສ່ວນພາຍນອກ.
- ສືບຕໍ່ກະກຽມຂຶ້ນແຜນງົບປະມານປະຈຳປີ 2013 ພາກສ່ວນຫ້ອງການ.
- ສືບຕໍ່ດຳເນີນ ປະກອບສັນຍາຈ້າງບໍ່ປະຈຳ, ເພື່ອມາອານາໄມຢູ່ສູນ ອທອ ຕະຫຼາດເຊົ້າມໍຢູ່ໃນຂັ້ນຕອນຕໍ່ລອງ.

ສືບຕໍ່ຈັດພິມປະກອບແບບຟອມການຝາກເຄື່ອງຂອງພະແນກ ບໍລິຫານ.

- ສືບຕໍ່ຕິດຕາມການປະກອບໂຕະຕັ່ງ, ໃສ່ຫ້ອງປະຊຸມຊັ້ນ 4 ຢູ່ໃນຂັ້ນຕອນຕໍ່ລອງລາຄາ(ຕຶກເຕັກນິກ 4ຊັ້ນ).
- ສືບຕໍ່ການອອກແບບຟອມເພື່ອປະກອບນໍາໃຊ້ເຂົ້າໃນວຽກງານບໍລິຫານ.
- ສືບຕໍ່ຕິດຕາມ, ການຕິດຕັ້ງກ້ອງວົງຈອນປິດຢູ່ຫຼັກ21
- ສືບຕໍ່ໃສ່ລະຫັດຊັບສິນທີ່ເກີດຂຶ້ນໃໝ່ ແລະ ສືບຕໍ່ຮັບເຂົ້າ-ຈ່າຍອອກ ບັດ, ຊິມ, ເຄື່ອງສິ່ງເສີມການຂາຍ.
- ຮ່ວມກັບພະແນກ ບັນຊີ ໄປແນະນໍາພ້ອມຕິດຕາມການໃສ່ລະຫັດຊັບສິນ ຢູ່ສາຂາ ອທອ ຊຽງຂວາງ, ສາຂາ ຊໍາເໜືອ.
- ໄປຕິດຕາມການກໍ່ສ້າງອາຄານຫ້ອງການ ສາຂາ ອທອ ຫຼວງນໍ້າທາ ແລະ ໜ່ວຍບໍລິການ ເມືອງສິງ.
- ຮ່ວມກັບພະແນກ ບັນຊີ ໄປແນະນໍາພ້ອມຕິດຕາມການໃສ່ລະຫັດຊັບສິນ ຢູ່ສາຂາ ອທອ ສາລະວັນ, ເຊກອງ, ອັດຕະປື.
- ກະກຽມ ຍົກຍ້າຍ Container ພະແນກ ສາຍສົ່ງໄປໄວ້ຢູ່ນາທົ່ມ.
- ກະກຽມຮ່າງສັນຍາ ປຸກສ້າງສູນບໍລິການເມືອງປາກລາຍຄືນໃໝ່ຈາກເດີມ 1ຊັ້ນ, ປ່ຽນເປັນ 2ຊັ້ນ.
- ໄປປັກແຜນຜັງການກໍ່ສ້າງ ສູນບໍລິຫານເມືອງພູຄູນ.
- ເປີດຊ່ອງແຂ່ງຂັນລາຄາປຸກສ້າງ ເຮືອນຈັກໄຟຟ້າ, ມຸງບ່ອນຈອດລົດປະທານ ແລະ ກໍາມະການຜູ້ບໍລິຫານ.
- ສືບຕໍ່ ການຈັດຊື້ Battery 200Ah/12V ຈໍານວນ 800 ໜ່ວຍ ແມ່ນຢູ່ໃນຂັ້ນເຮັດສັນຍາ.

- ສືບຕໍ່ ການຈັດຊື້ ກ້ອງວົງຈອນປິດ, ອຸປະກອນພ້ອມຕິດຕັ້ງຢູ່ສາຍລົມ ແມ່ນຕໍ່ລອງລາຄາແລ້ວ ຢູ່ໃນຂັ້ນຕອນເຮັດສັນຍາ, ສ່ວນຢູ່ຫຼັກ 21 ແມ່ນກໍາລັງຢູ່ໃນຂັ້ນຕອນການຕິດຕັ້ງເຄື່ອງ
- ສືບຕໍ່ ການຈັດຊື້ ອຸປະກອນສໍາຮອງອຸປະກອນສື່ສານ ແມ່ນຢູ່ໃນຂັ້ນຕອນຂໍລາຄາ ເພື່ອທາບທາມລາ ຄາ (ໄລຍະເວລາເປີດຊອງ ພາຍໃນ 02 ອາທິດ).
- ສືບຕໍ່ ການຈັດຊື້ ເຄື່ອງລະບົບ HR ແລະ MIS ແມ່ນຕໍ່ລອງລາຄາແລ້ວ ຢູ່ໃນຂັ້ນຕອນເຮັດສັນຍາ.
- ສືບຕໍ່ ການຈັດຊື້ ອຸປະກອນສາຍເຊົ່າ Media Convertor ຢູ່ໃນຂັ້ນຕອນເຮັດສັນຍາ.
- ສືບຕໍ່ ການຈັດຊື້ ແອເຢັນ 12,000 BTU ຊະນິດ Window ແມ່ນຢູ່ໃນຂັ້ນຕອນລໍຖ້າເປີດຊ່ອງ.
- ສືບຕໍ່ ການຈັດຊື້ Optic module ແລະ FC to LCSM. Path Cable ແມ່ນຢູ່ໃນຂັ້ນຕອນການສັ່ງຊື້ຜ່ານ Web site ນໍາບໍລິສັດ AD-Net technology.Co.ltd
- ການຈັດຊື້ໂຕະຕັ່ງໃສ່ຫ້ອງປະຊຸມຊັ້ນ 4 ຕຶກເກົ່າ ແມ່ນຢູ່ໃນຂັ້ນຕອນການສັ່ງຊື້.
- ການຈັດຊື້ ລະບົບຈອດລົດໃສ່ປະຕູເຂົ້າອອກ ຂອງສູນກາງໂທລະສັບມືຖືຫຼັກ 21 ແມ່ນຢູ່ໃນຂັ້ນຕອນການແຕ່ງຕັ້ງ.
- ການຈັດຊື້ ອຸປະກອນ Open Rack 19 ກໍາລັງລໍຖ້າບໍລິສັດມາປະມູນເພີ່ມເພາະ ມັນບໍ່ມີຜູ້ຢາກເຂົ້າມາປະມູນ.
- ການຈັດຊື້ ອຸປະກອນຕິດຕັ້ງ(ຫຼັກດິນ) ຈໍານວນ 1000 ອັນ ແມ່ນລໍຖ້າ Ad ເງິນຢູ່.
- ການຜະລິດປະຕິທິນແຂວນຝາ, ຕັ້ງໂຕະ ແລະ ບັດອວຍພອນ ຢູ່ໃນຂັ້ນຕອນລໍເປີດຊ່ອງ.

## III. <u>ວຽກຕາມບົດບັນທຶກສ່ອງແສ່ງ:</u>

- ທາງພະແນກ ໄດ້ມີການຄົ້ນຄ້ວາດົນນໍ້າເຄັມກັບ 3ອົງການຈັດຕັ້ງ ແລະ ສະຫະກອນອອມຊັບ ອທອ ກັບ 3ອົງການຈັດ ຕັ້ງ ແລະ ສາະຫະກອນອອມຊັບແລ້ວ.

- ທາງພະແນກ ໄດ້ມີການພົວພັນກັບ ບໍລິສັດ Star Telecom ແລ້ວ ທາງເຂົາເຈົ້າໄດ້ສະເໜີໃຫ້ເຮັດໃບຢັ້ງຢືນ ປະຕິບັດວຽກແຕ່ລະຄັ້ງ.
- ທາງພະແນກ ໄດ້ມີການສັງລວມຂໍ້ມູນທີ່ກ່ຽວຂ້ອງໃຫ້ພະແນກ ICT ແລ້ວເຫຼືອແຕ່ພິມຂໍ້ມູນເປັນພາສາອັງກິດໃຫ້.
- ທາງພະແນກ ໄດ້ມີການຄົ້ນຄ້ວາກັບ 3 ອົງການຈັດຕັ້ງ ແລ້ວ, ເພື່ອຈະຈັດງານໃນວັນສ້າງຕັ້ງ ບໍລິສັດ ອີທີແອລ ມະຫາຊົນ ແລະ 2 ວັນສຳຄັນປະຫວັດ.
- ທາງພະແນກ ກຳລັງດຳເນີນ ວາງແຜນກຳນົດພະນັກງານຂອງຕົນຄືນໃໝ່ ກ່ຽວກັບພາລະບົດບາດ ແລະ ກົງຈັກການຈັດຕັ້ງ ເພື່ອໃຫ້ມັນສອດຄ່ອງກັບສະພາບຄວາມເປັນຈິງ ແລະ ໃຫ້ມີປະສິດທິຜົນເພື່ອສາມາດປະຕິບັດແຜນການໃນທ້າຍປີນີ້.
- ທາງພະແນກ ໄດ້ມີການພົວພັນກັບ ບໍລິສັດພາຍນອກແລ້ວ(ກຳລັງລໍຖ້າຄຳຕອບ), ໃນການສະສາງ ອຸປະກອນສູນກາງລະບົບມືຖື MSC(ASB) ທີ່ບໍ່ໄດ້ນຳໃຊ້.

## IV. ວຽກຄ້າງ:

## V. ຂໍ້ສະເໜີ:

ຫົວໜ້າພະແນກ

ສຸພາລັກ ມັ່ງໜໍ່ເມກ